This VIS translation is out of date. When you give your patient this translation, also give them the up-to-date English version of it.
To get both, and to find out what was updated, go to www.immunize.org/vis

# ການສັກຢາປ້ອງກັນພະຍາດຄໍຕີບ, ບາດທະຍັກ, ໄອຫືດ

## ສິ່ງທີ່ທ່ານຄວນຮູ້

## 1 ເປັນຫຍັງຈຶ່ງຕ້ອງສັກຢາວັກຊີນປ້ອງກັນ?

**ພະຍາດຄໍຕີບ, ບາດທະຍັກ ແລະໄອຫືດ ເປັນພະຍາດທີ່ຮ້າຍແຮງຊຶ່ງມີສາເຫດເກີດຈາກເຊື້ອແບກທີເຣັຍ.** ພະຍາດຄໍຕີບແລະພະຍາດໄອຫືດສາມາດແຜ່ພາຍເຊື້ອຈາກຜູ້ນຶ່ງໄປຫາອີກຜູ້ນຶ່ງໄດ້. ພະຍາດບາດທະຍັກສາມາດເຂົ້າສູ່ຮ່າງກາຍໄດ້ທາງບາດແຜ.

**ພະຍາດຄໍຕີບ**ເປັນສາເຫດເຮັດໃຫ້ບໍລິເວນສ່ວນຫລັງຂອງລໍາຄໍຫນາຂຶ້ນ.
  ມັນເຮັດໃຫ້ເກີດບັນຫາກ່ຽວກັບການຫາຍໃຈ, ອ່ອນເພັຍ, ຫົວໃຈລົ້ມເຫລວ, ແລະອາດເຮັດໃຫ້ເສັຍຊີວິດ.

**ບາດທະຍັກ (ຫລືເອີ້ນອີກຢ່າງນຶ່ງວ່າ ຄາງລ້າງ)** ເຮັດໃຫ້ກ້າມເນື້ອເຈັບປວດ, ໂດຍທົ່ວໄປຈະເຈັບທົ່ວຮ່າງກາຍ.
  ມັນເຮັດໃຫ້ກະດູກກະໄຕຄາງ "ລ້າງ" ພາໃຫ້ບໍ່ສາມາດທີ່ຈະອ້າປາກ ຫລືກືນອາຫານໄດ້. ບາດທະຍັກສາມາດເຮັດໃຫ້ເສັຍຊີວິດໄດ້ ປະມານ 1 ໃນ 10 ລາຍ.

**ພະຍາດໄອຫືດ (ໄອຫືດ)** ເປັນສາເຫດເຮັດໃຫ້ໄອຕິດຕໍ່ເປັນເວລາດົນແລະຮຸນແຮງຊຶ່ງເປັນເລື້ອງລໍາບາກສໍາລັບເດັກນ້ອຍ. ເຮັດໃຫ້ກືນ, ດື່ມ, ຫລື ຫັນໃຈຍາກ. ອາການໄອນີ້ແບບນີ້ອາດໃຊ້ເວລາເປັນອາທິດຈຶ່ງຈະເຊົາດີ.
  ມັນເຮັດໃຫ້ເປັນໂຣກປອດອັກເສບ, ຊັກ (ກະຕຸກແລະເກັງ), ສະຫມອງພິການ, ແລະເສັຍຊີວິດ.

**ວັກຊີນປ້ອງກັນພະຍາດຄໍຕີບ, ບາດທະຍັກ, ແລະໄອຫືດ (DTaP) ສາມາດຊ່ວຍປ້ອງກັນພະຍາດເຫລົ່ານີ້ໄດ້.** ເດັກສ່ວນໃຫຍ່ທີ່ໄດ້ຮັບວັກຊີນປ້ອງກັນ DTaP ຈະມີພູມຕ້ານທານຮ່າງກາຍຕະຫລອດໄວເດັກ. ຈະມີເດັກນ້ອຍຈໍານວນຫລວງຫລາຍທີ່ຈະເປັນພະຍາດເຫລົ່ານີ້ ຖ້າພວກເຮົາຢຸດສັກຢາປ້ອງກັນພະຍາດ.

DTaP ແມ່ນວັກຊີນແບບໃຫມ່ທີ່ດັດແປງມາຈາກວັກຊີນເກົ່າທີ່ມີຊື່ວ່າ DTP. DTP ບໍ່ໄດ້ນໍາມາໃຊ້ອີກຕໍ່ໄປແລ້ວໃນສະຫະລັດອາເມລິກາ.

## 2 ໃຜຄວນໄດ້ຮັບວັກຊີນປ້ອງກັນ DTaP ແລະຄວນຮັບຍາມໃດ?

**ເດັກນ້ອຍ** ຄວນໄດ້ຮັບວັກຊີນ DtaP 5 ຂະຫນານ, ດັ່ງແຕ່ລະຊ່ວງອາຍຸຕໍ່ໄປນີ້:

✓ 2 ເດືອນ ✓ 4 ເດືອນ ✓ 6 ເດືອນ
✓ 15-18 ເດືອນ ✓ 4-6 ປີ

DTaP ສາມາດສັກໄດ້ໃນເວລາດຽວກັນກັບວັກຊີນອື່ນໆ.

## 3 ເດັກນ້ອຍບາງຄົນບໍ່ຄວນສັກວັກຊີນ DTaP ຫລື ຄວນ ລໍຖ້າກ່ອນ

ເດັກນ້ອຍທີ່ມີອາການເຈັບປ່ວຍເລັກນ້ອຍ, ເຊັ່ນ ເປັນຫວັດ, ອາດສັກວັກຊີນໄດ້. ແຕ່ເດັກນ້ອຍທີ່ມີອາການປ່ວຍປານກາງ ຫລື ປ່ວຍຫນັກ ຄວນຈະລໍຖ້າໄປກ່ອນຈົນກວ່າຈະເຊົາດີແລ້ວຈຶ່ງສັກວັກຊີນ DTaP.

ເດັກນ້ອຍທີ່ມີອາການແພ້ຫລັງສັກວັກຊີນ DTaP ຂະຫນານທີນຶ່ງ ບໍ່ຄວນສັກວັກຊີນຂະຫນານຕໍ່ໄປອີກ.

ເດັກນ້ອຍທີ່ປ່ວຍເນື່ອງຈາກໂຣກຣະບົບປະສາທຫລືສະຫມອງ ພາຍໃນ 7 ມື້ ຫລັງຈາກສັກວັກຊີນ DTaP ຂະຫນານທີນຶ່ງແລ້ວບໍ່ຄວນສັກວັກຊີນຂະຫນານຕໍ່ໄປອີກ.

ຈົ່ງປຶກສາກັບທ່ານຫມໍຂອງທ່ານ ຖ້າລູກຂອງທ່ານ:
- ມີອາການຊັກ ຫລືລົ້ມລົງ ຫລັງສັກວັກຊີນ DTaP ຂະຫນານທີນຶ່ງແລ້ວ,
- ຮ້ອງໄຫ້ບໍ່ເຊົາເປັນເວລາ 3 ຊົ່ວໂມງ ຫລື ດົນກວ່ານັ້ນ ຫລັງສັກວັກຊີນ DTaP ຂະຫນານທີນຶ່ງແລ້ວ,
- ມີໄຂ້ສູງກວ່າ 105 ອົງສາຟາເຣັນໄຮ ຫລັງສັກວັກຊີນ DTaP ຂະຫນານທີນຶ່ງແລ້ວ.

ຖາມເຈົ້າຫນ້າທີ່ໂຮງຫມໍເພື່ອຂໍລາຍລະອຽດຕື່ມ. ເດັກນ້ອຍບາງຄົນທີ່ມີອາການດັ່ງກ່າວບໍ່ຄວນຮັບວັກຊີນປ້ອງກັນພະຍາດໄອຫືດຕື່ມອີກ, ແຕ່ອາດຈະຮັບວັກຊີນອີກຢ່າງນຶ່ງ, ທີ່ມີຊື່ວ່າ **ດີທີ (DT)**.

## 4 ເດັກໃຫຍ່ແລະຜູ້ໃຫຍ່

ບໍ່ຄວນສັກວັກຊີນ DTaP ໃຫ້ກັບເດັກນ້ອຍທີ່ມີອາຍຸ 7 ປີຂຶ້ນໄປ ເພາະວ່າວັກຊີນໄອຫືດໄດ້ຮັບອະນຸຍາດໃຫ້ໃຊ້ກັບເດັກນ້ອຍອາຍຸຕໍ່າກວ່າ 7 ປີເທົ່ານັ້ນ.

ແຕ່ເດັກໃຫຍ່, ຄົນຫນຸ່ມສາວ, ແລະຜູ້ໃຫຍ່
ຍັງຈໍາເປັນຕ້ອງໄດ້ຮັບການປ້ອງກັນ ຈາກພະຍາດບາດທະຍັກແລະພະຍາດຄໍຕີບ.
ຢາສັກຕິດຕາມ (booster shot) ທີ່ແນະນໍາຄື **ທີດີ (Td)**
ສໍາລັບກັບເດັກນ້ອຍອາຍຸ 11-12 ປີ, ແລະສັກອີກທຸກໆ 10 ປີ.
ມີຂໍ້ມູນຈໍາແຍກເຣື່ອງວັກຊີນ ສໍາລັບວັກຊີນ Td ໂດຍສະເພາະ.

## 5 ວັກຊີນ DTaP ມີອັນຕະລາຍຫຍັງແດ່?

ການເປັນພະຍາດຄໍຕີບ, ບາດທະຍັກ, ຫລື ໄອຫືດ ມີອັນຕະລາຍຫລາຍກວ່າ ການສັກວັກຊີນປ້ອງກັນ DTaP.

ຢ່າງໃດກໍ່ຕາມ, ວັກຊີນ, ກໍ່ຄືກັນກັບຢາອື່ນໆ, ສາມາດເຮັດໃຫ້ເກີດ ບັນຫາຮ້າຍແຮງຕ່າງໆໄດ້, ເຊັ່ນ ມີອາການແພ້ຢ່າງຮຸນແຮງ. ອັນຕະລາຍຂອງ ວັກຊີນ DTaP ທີ່ຈະເຮັດໃຫ້ເປັນອັນຕະລາຍຮ້າຍແຮງ ຫລື ເສັຍຊີວິດ, ແມ່ນມີນ້ອຍທີ່ສຸດ.

**ບັນຫາເລັກນ້ອຍ (ບັນຫາທົ່ວໄປ)**

ມີໄຂ້ (ມີປະມານ 1 ໃນຈຳນວນເດັກນ້ອຍ 4 ຄົນ)
ຝົ່ນແດງແລະບວມບໍລິເວນທີ່ສັກຢາ (ມີປະມານ 1 ໃນຈຳນວນເດັກນ້ອຍ 4 ຄົນ)
ປວດ ຫລື ຊ້ຳ ບໍລິເວນທີ່ສັກຢາ (ມີປະມານ 1 ໃນຈຳນວນເດັກນ້ອຍ 4 ຄົນ)

ບັນຫາເຫລົ່ານີ້ມັກເກີດຂຶ້ນຫລັງຈາກສັກຢາ DTaP ຂະຫນານທີ 4 ແລະທີ 5 ແລ້ວຫລາຍກວ່າຫລັງສັກຢາຂະຫນານແຮກໆ. ບາງເທື່ອຫລັງສັກວັກຊີນ DTaP ຂະຫນານທີ 4 ແລະທີ 5 ແລ້ວມັກຈະມີອາການໄຄ່ພອງຕາມແຂນຫລືຂາທີ່ສັກຢາແລະຈະໄຄ່ພອງຕັ້ງແຕ່ 1-7 ມື້ (ມີປະມານ 1 ໃນຈຳນວນເດັກນ້ອຍ 30 ຄົນ).

**ບັນຫາເລັກນ້ອຍອື່ນໆລວມທັງ:**

ອາການຫງຸດຫງິດ (ມີປະມານ 1 ໃນຈຳນວນເດັກນ້ອຍ 3 ຄົນ)
ເມື່ອຍ ຫລື ເບື່ອອາຫານ (ມີປະມານ 1 ໃນຈຳນວນເດັກນ້ອຍ 10 ຄົນ)
ປວດຮາກ (ມີປະມານ 1 ໃນຈຳນວນເດັກນ້ອຍ 50 ຄົນ)

ບັນຫາເຫລົ່ານີ້ມັກເກີດຂຶ້ນ 1-3 ມື້ ພາຍຫລັງຈາກທີ່ສັກຢາ.

**ບັນຫາປານກາງ (ບໍ່ທຳມະດາ)**

ອາການຊັກ (ກະຕຸກ ຫລື ຕາຄ້າງ) (ມີປະມານ 1 ໃນຈຳນວນເດັກນ້ອຍ 14,000 ຄົນ)
ຮ້ອງໄຫ້ບໍ່ເຊົາ, ເປັນເວລາ 3 ຊົ່ວໂມງ ຫລື ດົນກວ່ານັ້ນ (ມີປະມານ 1 ໃນຈຳນວນເດັກນ້ອຍ 1,000 ຄົນ)
ມີໄຂ້ສູງ, ສູງກວ່າ 105 ອົງສາຟາເຣັນໄຮ (ມີປະມານ 1 ໃນຈຳນວນເດັກນ້ອຍ 16,000 ຄົນ)

**ບັນຫາຮ້າຍແຮງ (ບໍ່ຄ່ອຍມີ)**

ມີອາການແພ້ຢ່າງຮ້າຍແຮງ (ມີຕ່ຳກວ່າ 1 ໃນ 1 ລ້ານ)
ບັນຫາຮ້າຍແຮງອື່ນໆທີ່ໄດ້ຮັບໃນລາຍງານ ຫລັງການສັກວັກຊີນ DTaP.
ບັນຫາເຫລົ່ານີ້ຄື:
- ອາການຊັກໃນໄລຍະຍາວ, ຫມົດສະຕິ, ຫລື ມີອາການຮັບຮູ້ຕ່ຳ.
- ສະຫມອງພິການຖາວອນ.

ບັນຫາເຫລົ່ານີ້ເກີດຂຶ້ນໄດ້ນ້ອຍແລະຍາກທີ່ຈະບອກໄດ້ວ່າ ເປັນສາເຫດເກີດຈາກວັກຊີນ ຫລືບໍ່.

---

ການຄວບຄຸມໄຂ້ມີຄວາມສຳຄັນສຳລັບເດັກນ້ອຍທີ່ມີອາການຊັກ, ບໍ່ວ່າດ້ວຍເຫດຜົນໃດກໍ່ຕາມ. ແລະມີຄວາມສຳຄັນອື່ນອີກຖ້າຫາກວ່າຄົນອື່ນໃນຄອບຄົວມີອາການຊັກກະຕຸກ. ທ່ານສາມາດລົດໄຂ້ແລະອາການປວດໄດ້ໂດຍໃຫ້ລູກທ່ານກິນຢາແອສໄພຣິນຫລັງຈາກສັກຢາປ້ອງກັນ, ແລະໃຫ້ກິນອີກ 24 ຊົ່ວໂມງຖັດໄປ, ໂດຍເຮັດຕາມຄຳແນະນຳທີ່ຢູ່ໃນຊອງຢາ.

## 6 ຈະເຮັດແນວໃດຖ້າມີອາການແພ້ປານກາງ ຫລື ແພ້ຢ່າງຮຸນແຮງ?

**ຂ້າພະເຈົ້າຄວນສັງເກດເບິ່ງຈຸດໃດ?**

ອາການຜິດປົກກະຕິ, ເຊັ່ນ ມີອາການແພ້ຢ່າງຮຸນແຮງ, ມີໄຂ້ສູງ ຫລື ມີພຶດຕິກຳຜິດປົກກະຕິ. ວັກຊີນທົ່ວໄປມັກຈະບໍ່ເຮັດໃຫ້ເກີດອາການແພ້ທີ່ຮ້າຍແຮງ. ຖ້າຫາກມີ, ອາການດັ່ງກ່າວກໍ່ຈະເກີດຂຶ້ນພາຍໃນສອງສາມນາທີຈົນເຖິງສອງສາມຊົ່ວໂມງຫລັງການສັກຢາເທົ່ານັ້ນ. ອາການທີ່ເກີດຂຶ້ນອາດລວມເຖິງອາການຫາຍໃຈຍາກ, ສຽງແຫບຫລືຫອບ, ເປັນຜື່ນຄັນ, ມ້ານຈືດ, ອ່ອນເພັຍ, ຫົວໃຈເຕັ້ນໄວ ຫລືວິງວຽນ. ຖ້າມີອາການໄຂ້ສູງ ຫລື ຊັກກະຕຸກ, ກໍ່ມັກຈະເກີດຂຶ້ນພາຍໃນນຶ່ງອາທິດຫລັງການສັກຢາ.

**ຂ້າພະເຈົ້າຄວນເຮັດແນວໃດ?**

ໂທຫາທ່ານຫມໍ, ຫລື ພາຄົນນັ້ນໄປຫາທ່ານຫມໍທັນທີ.
ເວົ້າໃຫ້ທ່ານຫມໍຟັງເຖິງອາການທີ່ເກີດຂຶ້ນ, ວັນທີແລະເວລາທີ່ເກີດອາການ, ແລະວັນທີສັກວັກຊີນ.
ຂໍໃຫ້ທ່ານຫມໍ, ພະຍາບານ, ຫລືພະແນກສຸຂະພາບ ຂຽນລາຍງານອາການແພ້ຕໍ່ວັກຊີນ (VAERS), ຫລື ໂທໄປທີ່ສູນ VAERS ດ້ວຍຕົວທ່ານເອງທີ່ເລກໂທ **1-800-822-7967.**

## 7 ໂຄງການຈ່າຍຄ່າຊົດເຊີຍສຳລັບການເສັຍຫາຍຈາກການສັກວັກຊີນ ແຫ່ງຊາດ

ໃນບາງກໍລະນີ ທ່ານຫລືລູກຂອງທ່ານອາດມີອາການແພ້ຢາສັກປ້ອງກັນຢ່າງຮ້າຍແຮງ, ໂຄງການຂອງລັດໄດ້ຖືກຈັດຕັ້ງຂຶ້ນເພື່ອຊ່ວຍທ່ານຈ່າຍຄ່າປິ່ນປົວໃຫ້ກັບຜູ້ທີ່ໄດ້ຄວາມເສັຍຫາຍຈາກການສັກວັກຊີນປ້ອງກັນ.

ສຳລັບລາຍລະອຽດກ່ຽວກັບໂຄງການຈ່າຍຄ່າຊົດເຊີຍເນື່ອງຈາກໄດ້ຮັບຄວາມເສັຍຫາຍຈາກການສັກວັກຊີນແຫ່ງຊາດ, ໃຫ້ສອບຖາມໄດ້ທີ່ເລກໂທ **1-800-338-2382** ຫລື ເບິ່ງເວັບໄຊຂອງໂຄງການທີ່ **http://www.hrsa.gov/osp/vicp/**

## 8 ຂ້າພະເຈົ້າຈະຊອກຫາຂໍ້ມູນເພີ່ມເຕີມໄດ້ຢ່າງໃດ?

ຖາມເຈົ້າຫນ້າທີ່ໂຮງຫມໍຂອງທ່ານ. ເພິ່ນສາມາດໃຫ້ປື້ມຄູ່ມືກ່ຽວກັບວັກຊີນ ຫລື ແນະນຳແຫລ່ງຂໍ້ມູນອື່ນໆໃຫ້ທ່ານໄດ້.

ໂທຫາພະແນກສາທາລະນະສຸກໃນເຂດທີ່ທ່ານອາໄສຢູ່ເພື່ອສອບຖາມກ່ຽວກັບໂຄງການການສັກຢາປ້ອງກັນພະຍາດ.

ຕິດຕໍ່ສູນຄວບຄຸມແລະປ້ອງກັນໂຣກ (CDC):

- **Call 1-800-232-4636 (1-800-CDC-INFO)**
- ເບິ່ງທີ່ເວັບໄຊຂອງໂຄງການສັກຢາປ້ອງກັນພະຍາດແຫ່ງຊາດ ທີ່ **http://www.cdc.gov/nip** ຫລື ເວັບໄຊຂອງຫນ່ວຍງານໄວຣັດຕັບອັກເສບຂອງສູນຄວບຄຸມໂຣກຕິດຕໍ່ ທີ່ **http://www.cdc.gov/nip**

**U.S. DEPARTMENT OF HEALTH & HUMAN SERVICES**
Centers for Disease Control and Prevention
National Immunization Program

Vaccine Information Statement
DTaP (7/30/01) - Laotian 42 U.S.C. § 300aa-26

Translation provided by the Minnesota Department of Health